ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 0263 /ກຈພ
ນະຄອນຫຼວງວຽງຈັນ, ວັນທີ 03 ກຸມພາ 2023

# ແຈ້ງການ

ເຖິງ : - ຫ້ອງການກະຊວງ, ບັນດາກົມ, ສະຖາບັນ ແລະ ສູນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້.
- ບັນດາວິທະຍາໄລກະສິກຳ ແລະ ປ່າໄມ້, ໂຮງຮຽນຊົນລະປະທານຊັ້ນສູງທ່າງ່ອນ ທີ່ຂຶ້ນກັບ ກະຊວງກະສິກຳ ແລະ ປ່າໄມ້.
- ບັນດາພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ: ເຂົ້າຮ່ວມສະໝັກທຶນການສຶກສາ ລະດັບປະລິນຍາໂທ ແລະ ປະລິນຍາເອກ ຂອງລັດຖະບານອົດສະຕຣາລີ **(Australia Awards Scholarships)** ສຳລັບສົກປີ **2024.**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 1617/ກປ, ລົງວັນທີ 29 ທັນວາ 2021;
- ອີງຕາມ ໜັງສືແຈ້ງທຶນການສຶກສາຂອງສະຖາບັນລາວ-ອົດສະຕຣາລີ ສະບັບລົງວັນທີ 25 ມັງກອນ 2023;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ.

ກົມຈັດຕັ້ງ ແລະ ພະນັກງານຂໍຖືເປັນກຽດ ແຈ້ງມາຍັງທ່ານ ເພື່ອຄັດເລືອກເອົາພະນັກງານຜູ້ທີ່ມີເງື່ອນໄຂເຂົ້າຮ່ວມສະໝັກທຶນການສຶກສາລະດັບປະລິນຍາໂທ ແລະ ປະລິນຍາເອກ ຂອງລັດຖະບານອົດສະຕຣາລີ (Australia Awards Scholarships) ສຳລັບສົກປີ 2024.

<u>ເງື່ອນໄຂ ແລະ ວິທີການສະໝັກ:</u>

❖ <u>ລະດັບປະລິຍາໂທ</u>

- ຜູ້ທີ່ຈະສະໝັກຕ້ອງເປັນຄົນສັນຊາດລາວ ອາຍຸບໍ່ເກີນ 50 ປີ;
- ຜູ້ສະໝັກໃນລະດັບປະລິນຍາໂທ ຕ້ອງມີປະສົບການໃນການເຮັດວຽກທີ່ກ່ຽວຂ້ອງ ຢ່າງໜ້ອຍ 02 ປີ.
- ຜູ້ທີ່ຈະສະໝັກຕ້ອງຈົບການສຶກສາໃນລະດັບ ປະລິນຍາຕີ ຂຶ້ນໄປ ທັງພາຍໃນ ແລະ ຕ່າງປະເທດ(ໃບປະກາດ ແລະ ໃບຄະແນນແມ່ນໃຫ້ແປເປັນພາສາອັງກິດສຳລັບຜູ້ສະໝັກທີ່ຈົບພາຍໃນ)
- ຜູ້ສະໝັກຕ້ອງມີຄວາມຮູ້ດ້ານພາສາອັງກິດໃນລະດັບດີ, ຖ້າມີຄະແນນ IELTS ຈະເປັນການດີ;
- ຜູ້ສະໝັກທີ່ໄດ້ຈົບການສຶກສາລະດັບປະລິນຍາໂທແລ້ວກໍ່ສາມາດສະໝັກໄດ້ ແຕ່ຈະໄດ້ຮັບບຸລິມະສິດຕາມຫລັງຜູ້ທີ່ຍັງບໍ່ທັນໄດ້ຮັບທຶນປະລິນຍາໂທມາກ່ອນ;

❖ <u>ລະດັບປະລິນຍາເອກ</u>

- ຜູ້ທີ່ຈະສະໝັກຕ້ອງຈົບການສຶກສາໃນລະດັບ ປະລິນຍາໂທ ຂຶ້ນໄປ (ໃບປະກາດ ແລະ ໃບຄະແນນແມ່ນໃຫ້ແປເປັນພາສາອັງກິດສຳລັບຜູ້ສະໝັກທີ່ຈົບພາຍໃນ);
- ຜູ້ທີ່ຈະສະໝັກຕ້ອງເປັນຄົນສັນຊາດລາວ ອາຍຸບໍ່ເກີນ 50 ປີ;
- ຜູ້ສະໝັກຕ້ອງມີຄວາມຮູ້ດ້ານພາສາອັງກິດໃນລະດັບດີ ທັງພາສາເວົ້າ ແລະ ຂຽນ ໂດຍມີຄະແນນ IELTS ຢ່າງໜ້ອຍແມ່ນ 6.5 ;
- ຜູ້ສະໝັກໃນລະດັບປະລິນຍາເອກ ຕ້ອງມີປະສົບການໃນການເຮັດວຽກທີ່ກ່ຽວຂ້ອງກັບລະດັບປະລິນຍາເອກທີ່ຕົນເອງ ສະໝັກຢ່າງໜ້ອຍ 03 ປີ.

❖ ສຳລັບ Government of Laos approval letter ຂອງພະນັກງານຈາກບັນດາກົມ, ສະຖາບັນ, ສູນ ຢູ່ຂັ້ນສູນກາງ ລວມທັງບັນດາວິທະຍາໄລ ທີ່ຂຶ້ນກັບກົມຈັດຕັ້ງ ແລະ ພະນັກງານ ແມ່ນກົມຈັດຕັ້ງ ແລະ ພະນັກງານ ເຊັນຢັ້ງຢືນໃຫ້, ສ່ວນພະນັກງານຂັ້ນທ້ອງຖິ່ນ ແມ່ນ ພະແນກກະສິກຳ ແລະ ປ່າໄມ້ແຂວງ ເຊັນຢັ້ງຢືນໃຫ້.

ສຳລັບຮູບແບບການສະໝັກ ແມ່ນໃຫ້ບັນດາຜູ້ສົນໃຈຈະໄປສຶກສາຕໍ່ທຶນ AAS ສະໝັກຜ່ານແບບອອນລາຍ ທາງເວັບໄຊທ໌ <u>www.AustraliaAwardsLaos.org</u> ເລີ່ມແຕ່ວັນທີ **1 ກຸມພາ** ຈົນເຖິງ **1 ພຶດສະພາ 2023** ພາຍຫຼັງສະໝັກຜ່ານທາງເວັບໄຊທ໌ ແລ້ວໃຫ້ສຳເນົາ, ສະແກນສົ່ງໃຫ້ ພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ, ກົມຈັດຕັ້ງ ແລະ ພະນັກງານ ເພື່ອເປັນຂໍ້ມູນ ແລະ ຕິດຕາມ, ສ່ວນລາຍລະອຽດເພີ່ມເຕີມແມ່ນໃຫ້ພົວພັນພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ, ກົມຈັດຕັ້ງ ແລະ ພະນັກງານ: ທ. ສົມເພັດອຸດອນ ດວງມາລາ ໂທ: 021 415368, 020 52879569.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

**ຫົວໜ້າກົມ**

ບຸນທະວີ ໄຊຍະເພັດ

ກົມຈັດຕັ້ງ ແລະ ພະນັກງານ, ຕູ້ປນ 811, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ/ແຟັກ: 021 412347, 415368, 452455, E-mail: doapmaf@gmail.com